

ນ້ອງນ້ອຍນັກຮຽນ ບ້ານທົ່ງນ້ອຍ,ໃນປ່າສະຫງວນແຫ່ງຊາດນາກາຍນ້ຳເທີນ ກຳລັງເລືອກປຶ້ມອ່ານຫົວທຳອິດຂອງພວກເຂົາ

ການມອບປຶ້ມອ່ານ ຈຳນວນ **1,589** ຫົວ ເພື່ອຊຸກຍູ້ສົ່ງເສີມໃຫ້ນັກຮຽນໃນປ່າສະຫງວນແຫ່ງຊາດນາກາຍນ້ຳເທີນ

ໃນວັນທີ 29 ກຸມພາ 2012 ທີ່ປ່າສະຫງວນແຫ່ງຊາດນາກາຍນ້ຳເທີນ, ແຂວງຄຳມ່ວນ. ນາງ ຄາຣລີ ໄທເລີ ອາສາສະມັກຈາກປະເທດໂອສຕາລີ ປະຈຳອົງການຄຸ້ມຄອງ ແລະ ປົກປັກ ຮັກສາແຫຼ່ງນ້ຳ ນ້ຳເທີນ2, ໄດ້ໃຫ້ການຊ່ວຍເຫຼືອລ້າ ປຶ້ມອ່ານໃຫ້ແກ່ໂຮງຮຽນຢູ່ສາມເຂດຍອດນ້ຳ ຈຳນວນ 1,598 ຫົວ . ປຶ້ມອ່ານດັ່ງກ່າວໄດ້ແບ່ງອອກເປັນ 12 ຊຸດ ໝູນວຽນ ເຊິ່ງເປັນແນວ ຄວາມຄິດລິເລີ້ມທີ່ສຸມໃສ່ສ້າງເປັນຫໍສະມຸດເຄື່ອນທີ່ ຂອງອົງການ.

ປະຈຸບັນ ນາງ ຄາຣລີ ໄທເລີ ເປັນອາສາສະມັກປະຈຳຢູ່ ອົງການຄຸ້ມຄອງ ແລະ ປົກປັກຮັກສາ ແຫຼ່ງນ້ຳນ້ຳເທີນ2 ກອງເລຂາ ອຄປທ2. ໄດ້ປະສານສົມທົບກັບໂຮງຮຽນອະນຸບານ Redwood Park ແລະ ໝູ່ເພື່ອນຂອງລາວທີ່ປະເທດໂອສຕາລີ, ເພື່ອຂົນຂວາຍຊອກຫາທຶນຊ່ວຍເຫຼືອ. ໂດຍມີຈຸດປະສົງເພື່ອຈັດຫາປຶ້ມອ່ານສຳລັບເດັກນ້ອຍນັກຮຽນທຸກໆຄົນໃນສາມເຂດຍອດນ້ຳ ປ່າສະຫງວນແຫ່ງຊາດນາກາຍນ້ຳເທີນ ສປປ ລາວ. ໃນຄະນະດຽວກັນນັ້ນ, ກໍໄດ້ຮັບແຮງບັນດານໃຈໄດ້ຮັບການຊ່ວຍເຫລືອລ້າສະນັບສະໜູນມາ ເປັນເງິນທັງໝົດ 2,215 ໂດລາສະຫະລັດ.

ຈຳນວນເງິນທີ່ກ່າວມາຂ້າງເທິງນີ້,ແມ່ນໄດ້ຈັດຊື້ປຶ້ມອ່ານໄດ້ຈຳນວນ 1,589 ຫົວ ໃນນີ້ລວມມີປຶ້ມຄູ່ມືສຳລັບຄູສອນ, ຊຸດປຶ້ມອ່ານສຳລັບເດັກນ້ອຍ, ຊຸດປຶ້ມອ່ານສຳລັບຜູ້ໃຫຍ່ ແລະ ປຶ້ມຕຳລາການສອນອີກຈຳນວນນຶ່ງ. ໄດ້ຈັດອອກເປັນ 12 ຊຸດ ຫໍສະມຸດເຄື່ອນທີ່ນ້ອຍ ໃຫ້ມີການໝູນວຽນກັນລະຫ່ວາງໂຮງຮຽນກັບໂຮງຮຽນ ພາຍໃນເຂດປ່າສະຫງວນ. ທຸກໆບ້ານສາມາດເຂົ້າໄປອ່ານປຶ້ມຈຳນວນນີ້ໄດ້ໂດຍບໍ່ຈຳກັດ.

ໜ່ວຍງານໂຄສະນາສ້າງຈິດສຳນຶກວຽກງານອະນຸລັກຂອງອົງການຄຸ້ມຄອງ ແລະ ປົກປັກຮັກສາ ແຫຼ່ງນ້ຳນ້ຳເທີນ 2 ກອງເລຂາ ອຄປ ທ 2 ຮ່ວມກັບຫ້ອງການສຶກສາເມືອງນາກາຍໄດ້ເປີດງານ
ອ່ານປຶ້ມ ຢູ່ສາມເຂດເທິງ 3 ຄັ້ງ ເຂດລະ 1 ຄັ້ງ, ໃນງານດັ່ງກ່າວໄດ້ມີກິດຈະກຳ ແລະ ເກມຫຼາຍຢ່າງທີ່ຝຶກຄວາມສາມາດໃນການຮຽນຮູ້ໜັງສືໃຫ້ບັນດານ້ອງນັກຮຽນ ໃຫ້ມີຄວາມມັກໃນການ
ອ່ານເພື່ອເສີມສ້າງຄວາມຮູ້ຄວາມສາມາດເປັນກິດຈະກຳປະຈຳວັນຂອງພວກເຂົາ.

ອີງໃສ່ບົດລາຍງານຂອງ UNESCO EFA Global Monitoring ປີ (2011), ລາຍງານວ່າ: ຖ້ານັກຮຽນຢູ່ໃນປະເທດທີ່ມີລາຍຮັບສະເລ່ຍຕໍ່ຄົນຕ່ຳ ອອກຈາກໂຮງຮຽນປະຖົມໄປ ແລະ ມີຄວາມຊຳນານໃນການອ່ານຂັ້ນພື້ນຖານເຖິງ "171 ລ້ານຄົນ ສາມາດຫຼຸດພົ້ນອອກຈາກຄວາມ ທຸກຍາກ" ຫຼື ເທົ່າກັບ 12 % ຫຼຸດລົງຂອງຄວາມທຸກຍາກໃນໂລກ

ອົງການຄຸ້ມຄອງ ແລະ ປົກປັກຮັກສາແຫຼ່ງນ້ຳ ນ້ຳເທີນ 2 ກອງເລຂາ ອຄປ ທ 2 ຍັງມີແຜນສືບຕໍ່ເຮັດວຽກຮ່ວມກັບຫ້ອງການສຶກສາເມືອງນາກາຍ ແລະ ບັນດາກຸ່ມບ້ານເພື່ອສືບຕໍ່ຜັນຂະຫຍາຍກິດຈະກຳການຮຽນຮູ້ໜັງສື ແລະ ຈັດຫາອຸປະກອນການສຶກສາມີຫຼາຍຂຶ້ນໃຫ້ໂຮງຮຽນໃນປ່າສະຫງວນ, ເພາະວ່າກິດຈະກຳເຫຼົ່ານີ້ ເປັນອົງປະກອບສຳຄັນອັນນຶ່ງໃນໂຄງການພັດທະນາຊົນນະບົດ ໃນເຂດປ່າສະຫງວນ.

ນະໂອກາດດຽວກັນນີ້, ຂ້າພະເຈົ້າ ນາງ ຄາຣລີ ໄທເລີ ມີຄວາມຫວັງຢ່າງຫຍິ່ງວ່າ: ຫໍສະມຸດ ນ້ອຍເຄື່ອນທີ່ ແລະ ງານອ່ານປຶ້ມ ຈະສືບຕໍ່ໃຫ້ຄວາມຮູ້ພ້ອມທັງຍົກສູງຄຸນນະພາບການດຳລົງຊີວິດຂອງຊາວບ້ານໃນເຂດປ່າສະຫງວນນັບມື້ນັບດີຂຶ້ນເປັນກ້າວໆ.

ຈົນຂ້າພະເຈົ້າສາມາດເວົ້າໄດ້ວ່າ: ການເປີດງານອ່ານປຶ້ມໃຫ້ນ້ອງໆນ້ອຍນັກຮຽນໃນປ່າສະຫງວນແຫ່ງຊາດນາກາຍນ້ຳເທີນໃນຄັ້ງນີ້ເປັນສ່ວນນຶ່ງທີ່ໃຫ້ຜົນປະໂຫຍດສູງສຸດ ທີ່ບໍ່ອາດສາມາດພັນ ລະນາໄດ້. ເທື່ອນີ້ເປັນຄັ້ງທຳອິດ ທີ່ໄດ້ເຫັນບັນດານ້ອງໆນ້ອຍນັກຮຽນພ້ອມດ້ວຍເຖົ້າແກ່ແນວໂຮມພາກັນອ່ານປຶ້ມແບບມີຄວາມສະນຸກສະໜານ.

ຂ້າພະເຈົ້າໄດ້ເປີດໂອກາດໃຫ້ຊາວບ້ານທຸກໆຄົນ ສາມາດໄດ້ອ່ານ ແລະ ຮຽນຮູ້ໜັງສືຈາກປຶ້ມ. ອັນນີ້ເປັນຂອງຂັວນອັນລ້ຳຄ່າທີ່ສາມາດປ່ຽນຄົນໃຫ້ ກາຍເປັນຄົນມີຄວາມຮູ້ຄວາມສາມາດ ແລະ ເກີດຜົນປະໂຫຍດສູງສຸດໃນການດຳລົງຊີວິດໃນຊຸມຊົນ.

ຕິດຕໍ່


ທ. ເກດມະນີ ພັນມີໄຊ

ໜ່ວຍງານໂຄສະນາສ້າງຈິດສຳນຶກວຽກງານອະນຸລັກ

ອົງການຄຸ້ມຄອງ ແລະ ປົກປັກຮັກສາແຫຼ່ງນ້ຳ ນ້ຳເທີນ2

ກອງເລຂາ ອຄປ ທ2
ບ້ານອຸດົມສຸກ, ເມືອງນາກາຍ, ແຂວງຄຳມ່ວນ
ສປປ ລາວ
ໂທ:: +856 020 9513 6999